## ການເຮັດວຽກຮ່ວມກັນເພື່ອຜົນອອກມາ

### ອັນນີ້ແມ່ນຕົວຢ່າງບາງຢ່າງທີ່ພວກເຮົາໄດ້ບັນລຸຜົນສຳເຣັດໃນສອງປີ:

- ພວກເຮົາໄດ້ກໍ່ສ້າງສະພາຄົນໃຫມ່ຈາກຂີ້ດິນຂຶ້ນມາ;
- ພວກເຮົາໄດ້ອອກແບບແຜນແລະດຳເນີນການສຳຣວດຄວາມເພິ່ງພໍໃຈຂອງລູກຄ້າຊຶ່ງໄດ້ຖືກສົ່ງອອກໄປຫາລູກຄ້າຂອງພະແນກ DVRຈຳນວນ1,600 ຄົນ;
- ພວກເຮົາໄດ້ໃຊ້ຣາຍລະອຽດທີ່ລູກຄ້າໄດ້ເອົາໃຫ້ເພື່ອເປັນພື້ນຖານສຳລັບຄຳແນະນຳໃນນະໂຍບາຍຊຶ່ງໄດ້ຖືກສົ່ງໄປຫາຜູ້ນຳອະວຸໂສຂອງພະແນກ DVR ຍ້ອນວ່າເຂົາເຈົ້າໄດ້ຕັດສິນວ່າການກະທຳອັນໃດຈະສົ່ງເສີມການບໍຣິການໃຫ້ດີຂຶ້ນກວ່າເກົ່າ;
- ພວກເຮົາໄດ້ອຸປຖັມຊຸບຊິບສັງຄົມສຳລັບລູກຄ້າ8ບ່ອນທົ່ວຣັດແລະໄດ້ຮັບຄວາມຄິດຄວາມເຫັນຈາກປະຊາຊົນຣັດວໍຊິງຕັນຫລາຍກວ່າ200ຄົນ.

### ພວກເຮົາໄດ້ກໍ່ສ້າງການເຮັດວຽກຮ່ວມກັນທີ່ມີຜົນໃຊ້ການໄດ້ດີຊຶ່ງເປັນຜົນອອກມາໃນ:

- ການຕິດຕໍ່ເລື້ອຍໆຫລາຍກວ່າເກົ່າຣະຫວ່າງພະແນກ DVR ແລະລູກຄ້າຂອງເຂົາເຈົ້າ;
- ໂອກາດທີ່ມີຄວາມຫມາຍທີ່ສຸດສຳລັບການນຳພາໂດຍບຸກຄົນທີ່ມີຄວາມເສັຽອົງຄະຊຶ່ງມີຄວາມສຳຄັນເຖິງນະໂຍບາຍແລະພາກປະຕິບັດ;
- ການເຂົ້າເຖິງຫ້ອງການ DVR ທີ່ເພີ້ມຂຶ້ນ;
- ເວລາຫລາຍກວ່າເກົ່າສຳລັບລູກຄ້າທີ່ຈະຮ້ອງຂໍເອົາການຟັງເຣື່ອງຄວາມເປັນທັມ.

## ການກາຍເປັນສະມາຊິກ

eຈົ້າແຂວງໄດ້ແຕ່ງຕັ້ງສະມາຊິກໃຫ້ອາສາສະມັກສຳລັບຣະຍະສມັຍສາມປີ.ສະມາຊິກຂອງພວກເຮົາຈະເປັນຕົວແທນໃຫ້ກຸ່ມທີ່ສົນໃຈລວມທັງ:ລູກຄ້າຂອງພະແນກDVR ຄົນປັດຈຸບັນຫລືໃນຜ່ານມາ,ກິຈການຄ້າແລະອຸສຫະກັມ,ຄົນອອກແຮງງານ,ພະແນກDVR (ທັງພື້ນຖານແລະໂດຍຜູ້ອຳນວຍການ) ,ເພື່ອນຮ່ວມງານຊົນເຜົ່າຂອງVR,ໂຄງການຝຶກແອບໃຫ້ດີຄືນໃນຊຸມນຸມຊົນ,ໂຄງການຊ່ວຍເຫລືອລູກຄ້າ,ຫ້ອງການຫົວຫນ້າຫມວດຂອງການສຶກສາຂອງຫລວງ,ແລະໂຄງການຝຶກແອບແລະການສຶກສາສຳລັບພໍ່ແມ່.ພວກເຮົາຍິນດີຕ້ອນຮັບຜູ້ນຳຄົນໃຫມ່ແລະມີປະສົບປະການທີ່ຈະສະມັກ.ເພື່ອຈະຮ້ອງຂໍເອົາການອຳນວຍຄວາມສະດວກພິເສດໃນຣະຫວ່າງການດຳເນີນການຮ້ອງຂໍ,ຈົ່ງຕິດຕໍ່ໄປຫາຜູ້ອຳນວຍການຂອງພວກເຮົາໂດຍການໃຊ້ຣາຍລະອຽດຢູ່ຂ້າງລຸ່ມນີ້.

### ຂັ້ນຕອນຕໍ່ໄປຈະລວມເອົາ:

- ການຂຽນປະກອບໃບຄຳຮ້ອງສຳລັບສະມາຊິກສະພາຂັ້ນສູງ (ມີໄວ້ໃຫ້ຢູ່ໃນແວບໄຊທ໌ຂອງພວກເຮົາ) ;
- ການສົ່ງຫນັງສືສົນໃຈໄປຫາເຈົ້າແຂວງເພື່ອຈະອະທິບາຍໃຫ້ແຈ່ມແຈ້ງກ່ຽວກັບຄວາມຊຳນານຂອງທ່ານແລະວ່າເປັນຫຍັງທ່ານຈຶ່ງຢາກຈະຮັບໃຊ້ຢູ່ໃນ WSRC;
- ເອົາຫນັງສືສນັບສນູນໃຫ້ຈາກຜູ້ອ້າງອີງຄົນນຶ່ງສຳລັບຄຳຮ້ອງຂໍຂອງທ່ານ;

**Washington State Rehabilitation Council**
4565 7th Ave. SE
Olympia, WA 98504-5343
www.wastrehabcouncil.org
ໂທຣະສັບ: 360-725-3690(V)
ຖເລກໂທຟຣີ: 1-866-252-2939
ອີແມລ໌: Brounjm@dshs.wa.gov

# Washington State Rehabilitation Council



# ສະມັກເປັນສະມາຊິກໃນມື້ນີ້

www.wastrehabcouncil.org

> "ບໍ່ຕ້ອງສົງສັຍວ່າກຸ່ມນ້ອຍໆຂອງປະຊາຊົນທີ່ມີແນວຄິດກວ້າງໄກ,ມຸ່ງຫມາຍໃສ່ຈະສາມາດປ່ຽນແປງໂລກໄດ້ຫລືບໍ່.ຕາມທີ່ຈິງແລ້ວ,ມັນເປັນສິ່ງດຽວເທົ່ານັ້ນທີ່ເຄີຍມີມາ."
>
> – Margaret Mead

WSRC
Washington State Rehabilitation Council
*Building Inroads to Employment and Success*

DSHS 22-1188 LA (2/07)

# ມາຮ່ວມນຳສະພາຝຶກຝົນຂອງຣັດວໍຊິງຕັນ Washington State Rehabilitation Council ມື້ນີ້

## ກ່ຽວກັບພວກເຮົາ

ສະພາຝຶກຝົນຂອງຣັດວໍຊິງຕັນWashington State Rehabilitation Council (WSRC)ເປັນສະພາສະມາຊິກສິບຫ້າຄົນ.ພວກເຮົາເຮັດວຽກຮ່ວມກັນກັບພະແນກຝຶກຝົນວິຊາຊີບໃຫ້ດີຄືນຄືເກົ່າ(DVR) ເພື່ອຈະເພີ້ມຈຳນວນຄົນງານທີ່ມີຄວາມເສັຽອົງຄະຂື້ນຢູ່ໃນພະລັງງານຂອງຣັດວໍຊິງຕັນ.

ສະພາໄດ້ຖືກກໍ່ຕັ້ງຂື້ນໃນປີ1994 ໂດຍການປ່ຽນແປງທີ່ຖືກເຮັດຢູ່ໃນກົດຫມາຍRehabilitation Act ຢູ່ໃນຣະດັບຣັຖບານກາງແລະຄຳສັ່ງຂັ້ນສູງ 94-04 ຊຶ່ງໄດ້ຖືກເຮັດອອກມາໂດຍເຈົ້າແຂວງຢູ່ໃນຣະດັບຣັດ. ສະພາການຝຶກຝົນຂອງຣັດກໍ່ຕັ້ງໂອກາດໃຫ້ແກ່ບຸກຄົນຜູ້ທີ່ມີຄວາມເສັຽອົງຄະທີ່ຈະວາດພາບການບໍຣິການທີ່ຈະອູ້ມຊູເຂົາເຈົ້າໃນການໄປເຮັດວຽກ.

## ຄວາມມຸ່ງຫມາຍຕໍ່ການຮັບໃຊ້ຄົນອື່ນ

ຖ້າຫາກວ່າທ່ານຊອບໃຈໃນການຮ່ຳຮຽນ,ການກໍ່ສ້າງຄວາມສັມພັນ,ແລະການນຳພາສຳລັບການປ່ຽນແປງໃນຣະບົບ,WSRCເອົາໂອກາດທີ່ໃຫ້ຣາງວັນສຳລັບການບໍຣິການປະຊາຊົນອາສາສະມັກ.

ສະມາຊິກຈະໃຊ້ເວລາແລະເຫື່ອແຮງອັນຫລວງຫລາຍຢູ່ໃນພາລະກິດຂອງສະພາຂອງເຂົາເຈົ້າ.ສະມາຊິກແຕ່ລະຄົນຈະຮັບໃຊ້ສອງຄະນະກັມມະການແລະເຂົ້າຮ່ວມໃນວຽກງານຂອງສະພາເຕັມ.ພວກເຮົາຈະຈັດການປະຊຸມສອງມື້,ສີ່ເທື່ອແຕ່ລະປີຢູ່ໃນຊຸມນຸມຊົນທົ່ວຣັດ.ວຽກງານຂອງພວກເຮົາສ່ວນຫລາຍເກີດຂື້ນໃນຣະຫວ່າງການປະຊຸມເຫລົ່ານີ້.

ສະມາຊິກຂອງສະພາຈະຈັດແຈງການປະຊຸມແລະສະມາຊິກຈະຖືກຈ່າຍເງິນຄືນໃຫ້ສຳລັບຄ່າເດີນທາງແລະອາຫານໂດຍອີງຕາມຂອບເຂດການເດີນທາງຂອງຣັດ.

## ແບ່ງປັນຄວາມສະລາດສະຫລຽວຂອງທ່ານ

ຄວາມສຳເຣັດທີ່ດຳເນີນຕໍ່ໄປຂອງພວກເຮົາຈະຂື້ນຢູ່ກັບການວາດພາບສູນກາງຂອງສະມາຊິກທີ່ມຸ່ງຫມາຍໃສ່ຊຶ່ງຈະມີແນວຄິດອັນກວ້າງຂວາງ,ປະສົບປະການ,ແລະຄວາມສະລາດສະຫລຽວທີ່ຈະຮັບໃຊ້ຢູ່ໃນWSRC.

ຖ້າຫາກວ່າທ່ານກຳລັງພິຈາຣະນາຢາກກາຍເປັນສະມາຊິກ,ພວກເຮົາຂໍຊັກຊວນໃຫ້ທ່ານມາຮ່ວມໃນນຶ່ງຂອງການປະຊຸມຂອງພວກເຮົາ.ຖ້າຫາກວ່າທ່ານຢາກເວົ້ານຳຊະມາຊິກຜູ້ທີ່ອາສັຍຢູ່ໃກ້ກັນກັບທ່ານ,ພວກເຮົາຈະພູມໃຈທີ່ຈະຈັດຫາໃຫ້ທ່ານ.ພວກເຮົາຍັງຈະຍິນດີຮັບເອົາຄຳຖາມຂອງທ່ານອີກ.ຂອບໃຈໃນຄວາມສົນໃຈຂອງທ່ານໃນວຽກງານຂອງພວກເຮົາ.

> “ທຸກໆຄົນຕ້ອງມີສິດທີ່ຈະເຫັນເປັນຈິງໃນໂອກາດສຳລັບຄວາມສຳເຣັດຂອງເຂົາເຈົ້າໂດຍຜ່ານວຽກງານ. ຽສໄວ່ຈະເອົາໃຫ້ບຸກຄົນຜູ້ທີ່ມີຄວາມເສັຽອົງຄະ,ຜູ້ທີ່ຊອກເອົາຄວາມຫວັງແລະໂອກາດສຳລັບຄວາມຄືບຫນ້າທາງເສຖກິດ,ໂອກາດທີ່ຈະຖືກໄດ້ຍິນສຽງ.”
>
> – John Harrison
> Olympia

## ຄຳຂວັນ

ເພື່ອຈະອູ້ມຊູສນັບສນູນບຸກຄົນຜູ້ທີ່ມີຄວາມເສັຽອົງຄະທຸກໆຄົນໃຫ້ໄດ້ຮັບການບໍຣິການຝຶກຝົນວຽກງານໃຫ້ດີຄືນຄືເກົ່າທີ່ທຽບເທົ່າກັບປະເພນີວັທນະທັມຊຶ່ງອູ້ມຊູຄວາມຮັບຮູ້ເຫັນຈິງໃນພະລັງແຮງແລະກຽດຂອງເຂົາເຈົ້າແລະກາຍເກີນຄວາມຄາດຫມາຍຂອງເຂົາເຈົ້າ.

> “ຂ້າພະເຈົ້າຮັບໃຊ້ຢູ່ໃນWSRC ຍ້ອນວ່າຢູ່ໃນມື້ດີ,ພວກເຮົາຈະເຮັດໃຫ້ມີຄວາມແຕກຕ່າງຢູ່ໃນຊີວິດຂອງ10,000ຄົນ.”
>
> – Bill Murray
> Wenatchee

ເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບການສະມັກເປັນສະມາຊິກ

ໂທຣະສັບ: 1-866-252-2939
ອີແມລ໌: Brounjm@dshs.wa.gov
ແວ່ເຂົ້າເບິ່ງ: www.wastrehabcouncil.org

*ການອຳນວຍຄວາມສະດວກຈະຖືກຈັດຫາໃຫ້ຢ່າງພູມໃຈຕາມຄຳຮ້ອງຂໍ.*